ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

<u>ສຳນັກງານນາຍົກລັດຖະມົນຕີ</u>

ເລກທີ 157/ນຍ.

ນະຄອນຫລວງວຽງຈັນ, ວັນທີ 06 ຕຸລາ 2004

# ດຳລັດ
# ຂອງນາຍົກລັດຖະມົນຕີ
# ວ່າດ້ວຍ ການປະກາດໃຊ້ ແລະ ຈັດຕັ້ງປະຕິບັດ ແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ ສົກປີ 2004-2005

- ອີງໃສ່ ກົດໝາຍ ວ່າດ້ວຍ ລັດຖະບານແຫ່ງ ສປປ.ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6/5/2003
- ອີງໃສ່ ກົດຫມາຍ ວ່າດ້ວຍ ງົບປະມານແຫ່ງລັດ ຊຶ່ງປະກາດໃຊ້ໂດຍລັດຖະບັນຍັດ ຂອງປະທານປະເທດ ແຫ່ງ ສປປ. ລາວ ສະບັບເລກທີ 40 /ສປປ, ລົງວັນທີ 13 /08/ 1994;
- ອີງໃສ່ ມະຕິ ຂອງກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ V, ສະບັບເລກທີ 39/ສພຊ.V, ລົງວັນທີ 5 ຕຸລາ 2004 ວ່າດວ້ຍ ການຮັບຮອງເອົາ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ ສົກປີ 2004-2005.

## ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ :

**ມາດຕາ 1:** ປະກາດໃຊ້ ແລະຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ ສົກປີ 2004-2005, ເລີ້ມແຕ່ວັນທີ 01 ຕຸລາ ປີ 2004 ເຖິງວັນທີ 30 ກັນຍາ ປີ 2005 ຢ່າງເປັນເອກະພາບ ໃນຂອບ ເຂດທົ່ວປະເທດ.

**ມາດຕາ 2.** ແຜນພັດທະນາເສດຖະກິດ-ສັງຄົມ ແລະງົບປະມານແຫ່ງລັດ ສົກປີ 2004-2005 ແມ່ນແຜນຈັດຕັ້ງປະຕິບັດ ມະຕິກອງປະຊຸມ ຄະນະບໍລິຫານງານສູນກາງພັກ ຄັ້ງທີ 9 ( ສະໄຫມທີ VII ) ແລະ ມະຕິ ກອງປະຊຸມສະໄຫມສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ V ໃຫ້ປະກົດຜົນເປັນຈິງ, ໂດຍມີທິດທາງແລະໜ້າທີ່;

ບັນດາຄາດໝາຍຕົ້ນຕໍ ແລະການດຸ່ນດ່ຽງໃຫຍ່ໆ ຂອງເສດຖະກິດມະຫາພາກ; ຄາດໝາຍການລຶບລ້າງ ຄວາມທຸກຍາກ, ຫລຸດຜ່ອນການຖາງປ່າ-ເຮັດໄຮ່ ແລະ ຫລຸດຜ່ອນການປູກຝິ່ນ; ກຳນົດໂຄງປະກອບ ພັດທະນາ ຕາມຂະແໜງການ ແລະ ການພັດທະນາເຂດແຄວ້ນ; ກຳນົດແຜນງານໂຄງການ, ແຜນເງິນ, ແຜນຄົນ, ບັນດາມາດຕະການ ແລະ ມາດ ຕະການຕົ້ນຕໍ ເພື່ອຈັດຕັ້ງປະຕິບັດຕາມທິດທາງ ແລະ ຄາດໝາຍສູ້ຊົນ ທີ່ກຳນົດໄວ້ ໃນແຜນການ 5 ປີ (2001-2005) .

ມາດຕາ 3: ຄາດໝາຍສູ້ຊົນ ດ້ານເສດຖະກິດມະຫາພາກ ໃນສົກປີ 2004-2005 ມີດັ່ງນີ້ :

- ລວມຍອດຜະລິດຕະພັນພາຍໃນ (GDP) ທຽບໃສ່ສົກປີ 2003-04 ໃຫ້ເພີ່ມຂື້ນ 6,5-7% ໃນນັ້ນ :
  + ຍອດຜະລິດຕະພັນກະສິກຳ-ປ່າໄມ້ ໃຫ້ເພີ່ມຂື້ນ 3,5-4%.
  + ຍອດຜະລິດຕະພັນອຸດສາຫະກຳ ໃຫ້ເພີ່ມຂື້ນ 11-12%.
  + ການບໍລິການໃຫ້ເພີ່ມຂື້ນ 7-7,5%.
- GDP ສະເລັ່ຍໃສ່ຫົວຄົນໃຫ້ໄດ້ 438 ໂດລາ ຫລື ເທົ່າກັບ 4.730.000 ກີບ, ທຽບໃສ່ສົກປີຜ່ານມາ ເພີ່ມຂື້ນ 11,4% .
- ອັດຕາເງິນເຟີ້ ສະເລັ່ຍໝົດປີ ໃຫ້ຢູ່ໃນລະດັບບໍ່ເກີນ 8%, ຄວບຄຸມອັດຕາແລກປ່ຽນ ໃຫ້ມີ ຄວາມສະຫງົບ ແລະ ຄ່ອງຕົວ.
- ຄວບຄຸມການເພີ່ມຂື້ນ ຂອງບໍລິມາດເງິນລວມ ( M2 ) ບໍ່ໃຫ້ເກີນ 17% ທຽບໃສ່ປີຜ່ານມາ.
- ຮັກສາການຂາດດຸນການຊຳລະປົກກະຕິ ກັບຕ່າງປະເທດ ບໍ່ໃຫ້ເກີນ 5% ຂອງ GDP.
-, ເກັບລາຍຮັບງົບປະມານພາຍໃນໃຫ້ໄດ້ 3.600 ຕື້ກີບ ຫລື ເທົ່າກັບ 12,8% ຂອງGDP, ທຽບໃສ່ສົກປີຜ່ານມາເພີ່ມຂື້ນ 23,8%, ລາຍຈ່າຍງົບປະມານ 6.007 ຕື້ກີບ ເທົ່າກັບ 21,4% ແລະ ພະຍາຍາມເຮັດໃຫ້ການຂາດດຸນງົບປະມານບໍ່ເກີນ 8% ຂອງ GDP.
- ເຮັດໃຫ້ການລົງທຶນທົ່ວສັງຄົມ ກວມປະມານ 28% ຂອງ GDP, ໃນນັ້ນການລົງທຶນຂອງລັດ ກວມ 9,9% ຂອງ GDP; ການລົງທຶນ ຂອງເອກະຊົນພາຍໃນ ແລະ ຕ່າງປະເທດໃຫ້ໄດ້ 18,2% ຂອງ GDP, ລະດົມການລົງທຶນຂອງຕ່າງປະເທດ ໃຫ້ໄດ້ບໍ່ຕ່ຳກ່ວາ 500 ລ້ານໂດລາ.
- ຂົນຂວາຍຍາດແຍ່ງການຊ່ວຍເຫລືອລ້າ ແລະ ກູ້ຢືມຈາກຕ່າງປະເທດໃຫ້ໄດ້ປະມານ 417 ລ້ານໂດລາ.
- ຫລຸດຜ່ອນຈຳນວນຄອບຄົວທຸກຍາກລົງ ໃຫ້ໄດ້ປະມານ 52.000 ຄອບຄົວ, ຫລຸດຜ່ອນເນື້ອທີ່ໄຮ່ໃຫ້ໄດ້ 20.500 ຮຕ ແລະ ລຶບລ້າງເນື້ອທີ່ປູກຝິ່ນ ທີ່ມີຢູ່ໃນທົ່ວປະເທດໃຫ້ໄດ້ຢ່າງສິ້ນເຊີງ.
- ປະຕິບັດໂກຕາການຂຸດຄົ້ນໄມ້ ໃນສົກປີ 2004-2005 ຢ່າງເຂັ້ມງວດ, ບໍ່ໃຫ້ເກີນ 150.000 ແມັດກອັນ.
- ສູ້ຊົນຜະລິດເຂົ້າໃຫ້ໄດ້ 2,7 ລ້ານໂຕນ.

ມາດຕາ 4: ຕ້ອງສູ້ຊົນປະຕິບັດ ແຜນລາຍຮັບ ແລະ ລາຍຈ່າຍງົບປະມານປະຈຳປີ ຕາມຕົວເລກທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາໄວ້ ໃຫ້ເປັນຈິງຄື :

4.1 ລວມຍອດລາຍຮັບພາຍໃນ 3.600 ຕື້ກີບ , ທຽບໃສ່ ສົກປີຜ່ານມາ ເພີ່ມຂື້ນ 23,8% , ໃນນັ້ນ:

| | |
|---|---|
| + ຈາກສ່ວຍສາອາກອນ | 1.465 ຕື້ກີບ |
| + ຈາກພາສີຂາເຂົ້າຂາອອກ | 1.135 ຕື້ກີບ |
| + ຈາກທີ່ດິນ | 40 ຕື້ກີບ |
| + ຈາກຊັບສິນຂອງລັດ | 770 ຕື້ກີບ |
| + ລາຍຮັບວິຊາການ | 40 ຕື້ກີບ |
| + ແຫລ່ງລາຍຮັບອື່ນໆ | 150 ຕື້ກີບ |

4.2. ແຜນລາຍຈ່າຍງົບປະມານແຫ່ງລັດທັງໝົດແມ່ນ 6.007 ຕື້ກີບ ຫຼື ເທົ່າກັບ 21,4% ຂອງ GDP, ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 9,9% ລາຍຈ່າຍ ຕົ້ນຕໍ ສົກປີ 2004-2005 ມີດັ່ງນີ້ :

| | |
|---|---|
| 1. ລາຍຈ່າຍເງິນເດືອນ | 1.605 ຕື້ກີບ |
| 2. ລາຍຈ່າຍບໍລິຫານ | 530 ຕື້ກີບ |
| 3. ລາຍຈ່າຍດັດສົມສິ່ງເສີມ | 201,7 ຕື້ກີບ |
| 4. ລາຍຈ່າຍເງິນແຮ ແລະ ອື່ນໆ | 40 ຕື້ກີບ |
| 5. ລາຍຈ່າຍເງິນສະສົມຂອງລັດຖະບານ | ຕື້ກີບ |
| 6. ລາຍຈ່າຍໜີ້ສິນຕ່າງໆ | 860,3 ຕື້ກີບ |
| - ຈ່າຍຊຳລະໜີ້ສິນຕ່າງປະເທດ | 465,4 ຕື້ກີບ |
| - ຈ່າຍຊຳລະໜີ້ສິນພາຍໃນ | 396,9 ຕື້ກີບ |
| 7. ລາຍຈ່າຍການລົງທຶນຂອງລັດ | 2.770 ຕື້ກີບ |
| + ທຶນຊ່ວຍເຫລືອ ແລະ ກູ້ຢືມຈາກຕ່າງປະເທດ | 2.227 ຕື້ກີບ |
| + ຈ່າຍລົງທຶນພາຍໃນ | . 543 ຕື້ກີບ |
| - ລົງທຶນໃຫ່ມ | 305 ຕື້ກີບ |
| - ຈ່າຍໂຄງການບູລະນະທາງຫລວງແຫ່ງຊາດ | 24 ຕື້ກີບ |

**ມາດຕາ 5:** ມອບໃຫ້ ຄະນະກຳມະການແຜນການ ແລະ ການລົງທຶນ ປະຕິບັດດັ່ງນີ້:

5.1 ອອກແຈ້ງການ ໄປຍັງຂະແໜງການ ແລະທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດແຜນການລົງທຶນຂອງລັດໃນສົກປີ 2004-2005 ຕາມທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ ຈຳນວນ 1.613 ໂຄງການ ລວມເປັນມູນຄ່າ 2.770 ຕື້ກີບ, ໃນນັ້ນ ທຶນພາຍໃນ 543 ຕື້ກີບ ແລະ ທຶນຕ່າງປະເທດ 2.227 ຕື້ກີບ, ໂດຍໃຫ້ປະຕິບັດຢ່າງເຂັ້ມງວດ ຕາມດຳລັດເລກທີ 58/ ນຍ ວ່າດ້ວຍການຄຸ້ມຄອງການລົງທຶນຂອງລັດ; ສ້າງລະບຽບການ ແລະ ມາດຕະການ, ກົນໄກ ເພື່ອຕິດຕາມ, ກວດກາແລະຄວບຄຸມການປະຕິບັດໃຫ້ເປັນຮູບປະທຳ.

ທຸກໂຄງການລົງທຶນ ທີ່ນຳໃຊ້ແຫລ່ງທຶນຂອງລັດ, ນັບທັງການລົງທຶນຂອງລັດ ໃຫ້ແກ່ລັດວິສາຫະກິດ ການສົມທົບທຶນຂອງລັດກັບພາກເອກະຊົນ; ການປະກອບຫຸ້ນຂອງລັດ ໃນການສ້າງຕັ້ງວິສາຫະກິດປະສົມ ກັບພາຍໃນ

ຫລື ຕ່າງປະເທດ ລ້ວນແຕ່ຕ້ອງໄດ້ສ່ອງແສງໃຫ້ເຫັນຜ່ານແຜນການລົງທຶນຂອງລັດ ແລະ ມີການປະເມີນຜົນ ກ່ອນການອະນຸຍາດໃຫ້ລົງທຶນ; ບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນ ຕ້ອງເຂັ້ມງວດ ປະຕິບັດລະບຽບ ການຕິດຕາມ ປະເມີນຜົນໂຄງການລົງທຶນຂອງລັດ ຕາມລະບຽບການແບ່ງຂັ້ນຄຸ້ມຄອງທີ່ມີແລ້ວ.

5.2 ຄົ້ນຄວ້າ, ວິໄຈ, ຕິດຕາມ, ພະຍາກອນ ສະພາບເສດຖະກິດມະຫາພາກ ແລະ ຊອກມາດຕະການ, ວິທີການແກ້ໄຂທີ່ຄົບຊຸດ ແລະ ມີປະສິດທິພາບ ເພື່ອສະເໜີລັດຖະບານພິຈາລະນາ; ປັບປຸງກົນໄກການສ້າງ ແລະ ສັງລວມແຜນການ 5 ປີ ແລະແຜນການປະຈຳປີ ໃຫ້ແທດເໝາະກັບຕົວຈິງ; ການສ້າງ ແລະ ສັງລວມ ແຜນການປີ 2005-2006 ແລະ ແຜນການ 5 ປີ ຄັ້ງທີ VI ຕ້ອງດຳເນີນໄປພ້ອມກັບ ການປະຕິບັດແຜນການປີ 2004- 2005.

5.3 ຕ້ອງສົມທົບກັບຂະແໜງການ ແລະ ທ້ອງຖິ່ນຕ່າງໆ ຄົ້ນຄວ້າສ້າງແຜນແມ່ບົດການພັດທະນາຕາມຂະແໜງການ, ການພັດທະນາເຂດແຄວ້ນ, ແຜນແມ່ບົດ ການລົງທຶນຂອງລັດ ແລະ ນະໂຍບາຍສົ່ງເສີມການນຳໃຊ້ບັນດາແຫຼ່ງທຶນອື່ນໆ ເຂົ້າໃນການພັດທະນາ ແລ້ວສະເໜີ ລັດຖະບານພິຈາລະນາ.

5.4 ດຳເນີນການສຳຫລວດພົນລະເມືອງ ແລະ ທີ່ຢູ່ອາໃສຄັ້ງທີ III; ສືບຕໍ່ປັບປຸງລະບົບຂໍ້ມູນສະຖິຕິ ເພື່ອຮັບປະກັນໃຫ້ແກ່ ການຄົ້ນຄວ້າ, ການວາງແຜນ ແລະ ການພະຍາກອນເສດຖະກິດ ໃຫ້ແທດເໝາະກັບ ສະພາບຕົວຈິງ.

5.5 ປັບປຸງແກ້ໄຂບັນດາກົນໄກ, ນະໂຍບາຍເປັນຕົ້ນແມ່ນນະໂຍບາຍສົ່ງເສີມ ແລະ ປົກປ້ອງການລົງທຶນ, ປັບປຸງຂັ້ນຕອນອະນຸຍາດການລົງທຶນ ແລະ ພາຍຫລັງອະນຸຍາດ; ຍູ້ແຮງການລະດົມ ການລົງທຶນຈາກພາກທຸລະກິດຂອງລັດ ແລະ ເອກະຊົນພາຍໃນປະເທດ ແລະ ຕ່າງປະເທດຢ່າງແຂງແຮງ; ສ້າງ ແລະ ບູລະນະຕື່ມ ບັນດາກົນໄກສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ສືບຕໍ່ປະຕິບັດການບໍລິການຜ່ານປະຕູດຽວ ແລະ ມອບສິດອຳນາດໃຫ້ທ້ອງຖິ່ນມີສິດອະນຸມັດການລົງທຶນໃນຂະ ແໜງການບູ ລິມະສິດ ແລະ ການອະນຸມັດນຳເຂົ້າພາ ຫະນະ ແລະ ວັດຖຸດິບ ຕາມລະບຽບການ. ຊຸກຍູ້ຢ່າງແຂງແຮງ ການລົງທຶນເຂົ້າໃສ່ຂະແໜງທີ່ມີ ທ່າແຮງ. ເອົາໃຈໃສ່ ເປັນພິເສດ ການລົງທຶນຈາກ ຈີນ ແລະ ຫວຽດນາມ. ປັບປຸງລະບຽບການນຳເຂົ້າແຮງງານ ທີ່ມີລະດັບເຕັກນິກສູງ ໃຫ້ແກ່ການລົງ ທຶນ ຂອງຕ່າງປະເທດ, ພັດທະນາ ແຮງງານລາວ ແລະ ສະໜອງໃຫ້ພຽງພໍກັບຄວາມຕ້ອງການ; ຈຳກັດ ຫລຸດຜ່ອນ ແລະ ກ້າວ ໄປເຖິງການລົບລ້າງຂັ້ນຂອດ, ບາຣິແຢ, ການກວດກາທີ່ບໍ່ຈຳເປັນ.

5.6 ສົມທົບກັບກະຊວງການຕ່າງປະເທດ ເຜີຍແຜ່ໂຄສະນາ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ ແກ່ການລົງທຶນຕ່າງປະເທດ, ເພື່ອເພີ່ມທະວີການດຶງດູດທຶນ ODA ແລະ FDI ດ້ວຍຫລາຍຮູບການ.ໃຫ້ຈັດການສຳມະນາແລກປ່ຽນປະສົບການ ແລະ ແລກປ່ຽນຄຳເຫັນ ລະຫວ່າງອົງການມະຫາພາກກັບຜູ້ໃຫ້ ທຶນ, ກັບວິສາຫະກິດພາຍໃນ ແລະ ຕ່າງປະເທດ. ຕິດຕາມຕີລາຄາສະພາບການດຳເນີນທຸລະກິດ ຂອງທຸກ ພາກສ່ວນເສດຖະກິດ ເພື່ອປະຕິບັດນະໂຍບາຍຍ້ອງຍໍແກ່ຜູ້ທີ່ເຄື່ອນໄຫວດີ, ມີຜົນງານດີ.

5.7 ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ທອ້ງຖິ່ນ ຈັດຕັ້ງປະຕິບັດ ຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ, ທັງນີ້ ກໍ່ເພື່ອແນະນຳລະອຽດ ໃຫ້ຂະແໜງການ ແລະ ທ້ອງຖິ່ນ ນຳໄປຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳເທື່ອລະກ້າວ.

ມາດຕາ 6: ມອບໃຫ້ກະຊວງການເງິນ ປະຕິບັດດັ່ງນີ້:

6.1 ກະຊວງການເງິນຕ້ອງເອົາໃຈໃສ່ ຈັດຕັ້ງປະຕິບັດແຜນການ ແລະ ງົບປະມານ ສົກປີ 2004-2005 ນີ້ ໃຫ້ບັນລຸຄາດຫມາຍທີ່ສະພາແຫ່ງຊາດຮັບຮອງເອົາ ແລະ ບັນດາໜ້າວຽກຈຸດສຸມ ດັ່ງນີ້: (1) ຮີບຮ້ອນຄົ້ນຄ້ວາ ແລະ ອອກນະໂຍບາຍປະຢັດແຫ່ງຊາດ; (2) ຄຸ້ມຄອງ ບັນດາແຫລ່ງລາຍຮັບຂອງລັດ ລວມທັງ ຫວຍພັດທະນາ, ຫວຍ ກີລາ ແລະ ກອງທຶນບູລະນະທາງ; (3) ຄົ້ນຄ້ວາ ອອກພັນທະບັດຫລາຍຮູບແບບ, ຫລາຍໄລຍະ, ກູ້ຢືມ ຈາກ ທະນາຄານທຸລະກິດ; (4) ຫັນໜີ້ທະນາຄານ ສປປ ລາວ ຈາກເງິນ ໂດລາ ມາເປັນ ເງິນກີບ; (5) ຊອກແຫລ່ງກູ້ຢືມ ທີ່ບໍ່ມີເງື່ອນໄຂກົດດັນຫລາຍ ແລະ ດອກເບ້ຍຕໍ່າ, ໄລຍະກູ້ຍາວ ເພື່ອປະຕິບັດ ໂຄງການທີ່ເປັນ ບຸລິມະສິດ; (6) ເພີ້ມທະວີຊຸກຍູ້ ບັນດາຫົວໜ່ວຍທຸລະກິດ ໃຫ້ຖືບັນຊີຕາມລະບຽບກົດໝາຍໃຫ້ຄົບຖ້ວນ; (7) ປະຕິບັດມາດຕະການ ທີ່ເຂັ້ມງວດ ຕໍ່ທຸກກໍລະນີການຍົກເວັ້ນ ຫລື ຫລຸດພາສີ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ, ປັບປຸງການຈັດຕັ້ງ ພາສີ-ອາກອນ, ຄັງເງິນແຫ່ງຊາດ ໃຫ້ດີຂື້ນກວ່າເກົ່າ; ແບ່ງຂັ້ນ ແລະ ແບ່ງຄວາມຮັບຜິດຊອບໃຫ້ຈະແຈ້ງ ລະຫວ່າງ ກະຊວງການເງິນ ກັບ ທ້ອງຖິ່ນຕາມທິດ ຮັບປະກັນໃຫ້ການເງິນສູນກາງ ກໍາໃຫ້ໄດ້ແຫຼ່ງລາຍຮັບຫລາຍກວ່າ 60% ຂອງແຫລ່ງລາຍຮັບພາຍໃນທັງຫມົດ, ສ່ວນການເກັບ ແລະ ການຄຸ້ມຄອງຕົວຈິງ ແມ່ນມອບໃຫ້ທ້ອງຖິ່ນ, ທ້ອງຖິ່ນ ມີສິດ ແຕ່ງຕັ້ງ, ຍົກຍ້າຍ, ປົດຕໍາແໜ່ງ ແລະ ປະຕິບັດນະໂຍບາຍ ຕໍ່ຫົວໜ້າພະແນກການເງິນ, ຫົວໜ້າພາສີ-ອາກອນ ແລະ ຄັງເງິນ; (8) ປະຕິບັດ ການຍົກເວັ້ນອາກອນກໍາໄລ ແລະ ອາກອນເງິນເດືອນ ໃຫ້ແກ່ວິສາຫະກິດ ທີ່ໄປລົງທຶນຢູ່ເຂດຫ່າງໄກສອກຫລີກ ແລະ ທຸລະກັນດານ; (9) ຈັດຕັ້ງເຜີຍແຜ່ຂະຫຍາຍ ແລະ ປະຕິບັດເຂັ້ມງວດ ລັດຖະບັນຍັດເລກທີ 02 ຂອງປະທານປະເທດ ກ່ຽວກັບຄ່າທໍານຽມ ແລະ ຄ່າບໍລິການຕ່າງໆ; (10) ຄົ້ນຄວ້າ ວາງນະໂຍບາຍ ການຫັນຊັບສິນໃຫ້ເປັນທຶນ, ສ້າງ ແລະ ປັບປຸງບັນດາກົດລະບຽບ ທີ່ພົວພັນເຖິງການຫັນຊັບສິນໃຫ້ເປັນທຶນ, ຄົ້ນຄວ້າປັບປຸງໂຄງສ້າງຂອງລັດວິສາ ຫະກິດ ເພື່ອໃຫ້ເຄື່ອນໄຫວມີປະສິດທິຜົນ ໂດຍຢຸດຕິການເກື້ອກູນ ແບກຫາບ ຈາກງົບປະມານຂອງລັດ; (11) ອອກລະບຽບ ການບໍລິການສິນຄ້າຜ່ານແດນ ເພື່ອສາມາດນໍາໃຊ້ ທ່າແຮງ ທາງດ້ານ ທີ່ຕັ້ງເປັນໃຈກາງຂອງປະເທດເຮົາ ໃຫ້ມີປະສິດທິຜົນ, (12) ຄົ້ນຄວ້າປັບປຸງອັດຕາເກັບພາສີທີ່ດິນ ໃນເຂດທຸລະກັນດານ ແລະ ຄົ້ນຄວ້າໃໝ່ອັດຕາພາສີ ແລະ ຄ່າທໍານຽມທີ່ດິນປະເພດອື່ນໆ ໃຫ້ສອດຄ່ອງ.

6.2 ສືບຕໍ່ປັບປຸງກົງຈັກການຈັດຕັ້ງຂອງຕົນ, ເປັນຕົ້ນ ແມ່ນຂະແໜງພາສີ, ອາກອນ, ຄັງເງິນ, ຊັບສິນທີ່ດິນ, ກົມງົບປະມານແຫ່ງລັດ, ກົມຄັງເງິນແຫ່ງຊາດ ໃຫ້ສອດຄ່ອງ, ມີປະສິດທິພາບ ແລະ ບໍລິສຸດປອດໃສ, ກໍານົດປະເພດດ່ານນໍາເຂົ້າ-ອອກສິນຄ້າ ໃນແຕ່ລະທ້ອງຖິ່ນໃຫ້ເຫມາະສົມກັບຄວາມສາມາດ ແລະ ເງື່ອນໄຂຄຸ້ມຄອງ ຕົວຈິງຂອງແຕ່ລະດ່ານ, ວາງລະບຽບການ ກ່ຽວກັບ ການກວດກາການປະຕິບັດຫນ້າທີ່ ຂອງພະນັກງານພາສີ, ອາກອນ, ຊັບສິນທີ່ດິນ ແລະ ພະນັກງານການເງິນທຸກຂັ້ນ ແລ້ວດໍາເນີນການກວດກາຢ່າງເປັນປົກກະຕິ; ເຂັ້ມງວດ ໃນການລົງວິໄນຕໍ່ຜູ້ ລະເມີດລະບຽບກົດຫມາຍ ແລະ ຍ້ອງຍໍຜູ້ທີ່ມີຜົນງານ ຢ່າງເຫມາະ ສົມ ແລະ ທັນການ.

6.3 ໃຫ້ຂະແໜງພາສີ-ອາກອນທຸກຂັ້ນ ປັບປຸງລະບົບເຄື່ອງມືຮັບໃຊ້ ການເຄື່ອນໄຫວ ວຽກງານພາສີ-ອາກອນ ໃຫ້ທັນສະໄໝ, ຈັດຕັ້ງເກັບກໍາຂໍ້ມູນສະຖິຕິແຫຼ່ງລາຍຮັບພາສີ-ອາກອນ ຢ່າງເປັນລະບົບຄົບຊຸດ; ວາງມາດຕະການ ທີ່ມີປະສິດທິພາບ ເພື່ອສະກັດກັ້ນ ແລະ ປາບປາມການລັກລອບຫນີພາສີ, ການຄ້າເຖື່ອນ ແລະ ການຄ້າສິ່ງຜິດກົດໝາຍອື່ນໆ ໃນທຸກຮູບແບບ ແນໃສ່ເຮັດໃຫ້ການຈັດເກັບລາຍຮັບມີປະສິດທິຜົນ ແລະ ສາມາດ ກວດສອບໄດ້ທັງຢູ່ສູນກາງ, ແຂວງ, ເມືອງ ແລະ ບ້ານ ຢ່າງມີປະສິດທິພາບ.

6.4 ສົມທົບກັບທະນາຄານແຫ່ງ ສປປ ລາວ ແລະ ຄະນະກຳມະການແຜນການ ແລະ ການລົງທຶນ ຄົ້ນຄ້ວາ ສ້າງແຜນດຸນດ່ຽງເງິນຕາລວມ ແລະ ເງິນຕາຕ່າງປະເທດ ເພື່ອດຸນດ່ຽງທົ່ວເສດຖະກິດແຫ່ງຊາດ ແນໃສ່ສ້າງສະຖຽນລະພາບຂອງເສດຖະກິດ ໃຫ້ມີຄວາມໝັ້ນທ່ຽງ; ຄົ້ນຄວ້າແຜນແມ່ບົດເງິນກູ້ ,ແຜນງານການ ສຳລະສະສາງໜີ້ສິນຕ່າງປະເທດ ແລະ ນຳສະເໜີ ໃຫ້ລັດຖະບານ ພິຈາລະນາ.

6.5 ສົມທົບກັບກະຊວງກະສິກຳ-ປ່າໄມ້ ແລະ ກະຊວງການຄ້າ ປະຕິບັດຢ່າງເຄັ່ງຄັດຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 15/ນຍ ວ່າດ້ວຍການຄຸ້ມຄອງປ່າໄມ້ ແລະ ລະກິດໄມ້ ປະຈຳສົກປີ 2004-05.

6.6 ສົມທົບກັບກົມການປົກຄອງ ຄົ້ນຄ້ວາຈັດຕັ້ງປະຕິບັດຕົວຈິງ ຕາມການຕົກລົງຂອງລັດຖະບານ ວ່າດ້ວຍການ ເພີ່ມເງິນເດືອນ ແລະ ເງິນນະໂຍບາຍໃໝ່ ຄື: ເພີ່ມເງິນເດືອນຈາກ 1.500 ກີບ ຕໍ່ 1 ດັດສະນີນາ ເປັນ 1.800 ກີບ ໃຫ້ແກ່ພະນັກງານບຳນານ ເລີ້ມແຕ່ວັນທີ 1 ເດືອນ 4 ປີ 2005 ແລະ ສຳລັບພະນັກງານລັດຖະກອນ ໃຫ້ເລີ່ມປະຕິບັດ ນັບແຕ່ວັນທີ 1 ເດືອນ 7 ປີ 2005 ເປັນຕົ້ນໄປ. ການປັບປຸງເງິນເດືອນໃໝ່ຕ້ອງໄປພ້ອມໆກັບການກວດກາຈຳນວນພົນຕົວຈິງ ໃນທຸກຂະແໜງການ ແລະ ທ້ອງຖິ່ນ, ພ້ອມທັງຍົກຄຸນນະພາບວຽກງານຂັ້ນຕົ້ນ, ການຫລຸດຜ່ອນຈຳນວນພົນຂອງກົງຈັກ ແລະແກ້ໄຂສະພາບຄ້າງຈ່າຍເງິນເດືອນ ໃນໄລຍະຜ່ານມາ.

6.7 ສົມທົບກັບບັນດາແຂວງ ຄົ້ນຄວ້າກົນໄກການຈັດຕັ້ງ ແລະ ວິທີການ ແບ່ງຄວາມຮັບຜິດຊອບເກັບລາຍຮັບ- ຄຸ້ມຄອງລາຍຈ່າຍ ໂດຍປະຕິບັດຕາມດຳລັດ ເລກທີ 192/ນຍ ຢ່າງເຂັ້ມງວດ. ກຳນົດລະອຽດໜ້າທີ່, ຄວາມຮັບຜິດຊອບ ການເກັບລາຍຮັບ ແລະ ລາຍຈ່າຍ ລະຫວ່າງສູນກາງ ແລະທ້ອງຖິ່ນໃຫ້ຈະແຈ້ງ.

6.8 ສົມທົບກັບ ບັນດາພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າ ອາກອນມູນຄ່າເພີ່ມ ໃຫ້ທັນກັບເວລາທີ່ກຳນົດ.

6.9 ປັບປຸງ ກົນໄກການຈຳໜ່າຍພັນທະບັດຄັງເງິນໃຫ້ລະອຽດ, ຮັບປະກັນໃຫ້ມີປະສິດທິພາບ ແລະ ສາມາດ ກວດສອບໄດ້.

6.10 ປັບປຸງລະບົບການຈັດຕັ້ງ ການຕິດສະແຕມສິນຄ້າ ແລະ ອື່ນໆໃຫ້ໄວຂຶ້ນ ເພື່ອສ້າງລາຍຮັບເພີ່ມເຂົ້າງົບປະມານ. ພ້ອມດຽວກັນນັ້ນ ໃຫ້ສົມທົບກັບກວດກາ ແລະ ທວງເອົາໜີ້ສິນ ຂອງບັນດາຫົວໜ່ວຍທຸລະກິດຕ່າງໆ ທີ່ມີພັນທະຕໍ່ງົບປະມານ ຂອງລັດໃຫ້ໝົດ.

6.11 ສົມທົບ ຄຜທ ແລະ ທະນາຄານ ສືບຕໍ່ແກ້ໄຂໜີ້ສາມແຈ ຕາມການຕົກລົງຜ່ານມາ.

ມາດຕາ 7: ມອບໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດດັ່ງນີ້:

7.1 ສືບຕໍ່ປະຕິບັດນະໂຍບາຍ ເງິນຕາແບບຄ່ອງຕົວ, ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນທີ່ຄ່ອງຕົວ ແລະນະໂຍບາຍອັດຕາດອກເບ້ຍບວກ, ສົ່ງເສີມການນຳໃຊ້ເງິນກີບ ໃນການຊຳລະສະສາງພາຍໃນໃຫ້ຫລາຍຂຶ້ນ. ໃຫ້ອອກລະບຽບການ, ປະຕິບັດການຊຳລະເງິນຕາຕ່າງປະເທດ ຜ່ານລະບົບທະນາຄານ ແລະຄຸ້ມຄອງກະແສການໄຫລເຂົ້າ- ອອກຂອງເງິນຕາຕ່າງປະເທດ ຕາມລະບຽບການວາງໄວ້.

7.2 ສ້າງເງື່ອນໄຂໃຫ້ຄັງສຳຮອງ ເງິນຕາຕ່າງປະເທດເພີ່ມຂື້ນ, ສືບຕໍ່ຊຸກຍູ້ທະນາຄານທຸລະກິດ ເພື່ອປັບປຸງຄວາມສາມາດໃນການບໍລິການ ຂອງທະນາຄານໃຫ້ມີປະສິດທິພາບ ແລະໄດ້ມາດຕະຖານສາກົນເທື່ອລະກ້າວ ເພື່ອສ້າງຄວາມເຊື່ອຖືແກ່ລູກຄ້າ.

7.3 ຄົ້ນຄວ້າໂຄງການສ້າງຄວາມເຂັ້ມແຂງ ແລະພັດທະນາລະບົບ ສະຖາບັນການເງິນຢູ່ ສປປ ລາວ ເພື່ອກະຕຸ້ນການພັດທະນາເສດຖະກິດ, ສ້າງຄວາມເຊື່ອຖືຕໍ່ລູກຄ້າ ທັງພາຍໃນ ແລະຕ່າງປະເທດ; ພ້ອມດຽວກັນນັ້ນ ກໍໃຫ້ທະນາຄານ ແຫ່ງ ສປປ ລາວ ກະກຽມເງື່ອນໄຂທີ່ຈຳເປັນຕ່າງໆ ເພື່ອກ້າວໄປສູ່ ການພັດທະນາຕະຫລາດເງິນທຶນ ໃນຕໍ່ໜ້າ.

ມາດຕາ 8: ມອບໃຫ້ ທະນາຄານ, ກະຊວງການເງິນ ສົມທົບກັບກະຊວງການຄ້າ ແລະ ພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດ ການປ່ອຍສິນເຊື່ອບົວງສົ່ງເສີມການຜະລິດສິນຄ້າ ໂດຍຜ່ານລະບົບທະນາຄານ ຕາມນະໂຍບາຍຖົມຊຸມດອກເບັ້ຍ, ໃຫ້ກຳນົດລະບຽບ ແລະ ກົນໄກທີ່ຄ່ອງຕົວເພື່ອປ່ອຍສິນເຊື່ອ ໃຫ້ຖືກເປົ້າໝາຍສົ່ງເສີມຢ່າງແທ້ຈິງ ແລະເຮັດໃຫ້ນະໂຍບາຍ " ໜຶ່ງເມືອງ ໜຶ່ງຜະລິດຕະພັນ "ໄດ້ຮັບການຈັດຕັ້ງປະຕິບັດໃຫ້ ເປັນຮູບປະທຳ.

- ມອບໃຫ້ກະຊວງການຄ້າສືບຕໍ່ຄົ້ນຄວ້າ ວາງນະໂຍບາຍ ແລະບັນດາມາດຕະການຕ່າງໆເພື່ອ ຕິດຕາມ, ດັດສົມ ແລະ ແຊກແຊງ ຄຸ້ມຄອງລາຄາສິນຄ້າ, ລະບຽບການແບ່ງຂັ້ນ ເພື່ອຄຸ້ມຄອງການນຳເຂົ້າສິນຄ້າຍຸດທະສາດກັບບັນດາແຂວງ, ປັບປຸງ ແລະ ສ້າງກົນໄກທີ່ສອດຄ່ອງ ເພື່ອຊຸກຍູ້ສົ່ງເສີມການຜະລິດສິນຄ້າທົດ ແທນການນຳເຂົ້າ ແລະ ເປັນຂາອອກ. ເປີດກວ້າງຕະຫລາດສົ່ງອອກສິນຄ້າ, ເພີ່ມການຈັດງານວາງສະແດງສິນຄ້າ, ຕະຫຼາດນັດຂອງປະຊາຊົນ, ການສົ່ງ ເສີມການຄ້າຊາຍແດນ ແລະການຄ້າຜ່ານແດນໃຫ້ແຂງແຮງກວ່າເກົ່າ.

ມາດຕາ 9: ມອບໃຫ້ກະຊວງກະສິກຳ-ປ່າໄມ້ ແລະ ກະຊວງການຄ້າ ຄົ້ນຄວ້າກົນໄກຄວບຄຸມທີ່ຮັດກຸມ ແລະ ເຂັ້ມງວດ ຕໍ່ການປະຕິບັດ ຄຳສັ່ງນາຍົກລັດຖະມົນຕີ ກ່ຽວກັບ ການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ເພື່ອຫ້າມສົ່ງໄມ້ທ່ອນອອກສູ່ ຕ່າງປະເທດ ແລະ ສະເໜີແຜນໄລຍະສັ້ນແລະໄລຍະຍາວ ທີ່ມີໂຄງການລະອຽດ ໃນການສົ່ງເສີມການປຸງແຕ່ງໄມ້ສຳເລັດຮູບ ທີ່ມີມູນຄ່າເພີ່ມສູງເພື່ອສົ່ງອອກ ໂດຍຕິດພັນກັບ ການປູກປ່າໄລຍະຍາວ, ສ້າງແຜນ ແລະ ມາດຕະການ ເພື່ອປິດປ່າຫວງຫ້າມແຫ່ງຊາດ ຫັນມາພັດທະນາປ່າເສດຖະກິດເປັນກ້າວໆໄປ ເພື່ອຄວາມຍືນຍົງຂອງປ່າແຫຼ່ງນ້ຳ ແລະ ຊີວະນາງພັນຂອງຊາດ. ເອົາໃຈໃສ່ ປົກປັກຮັກສາສະພາບແວດລ້ອມ ແລະ ຊັບສິນຂອງລັດ, ຕ້ອງປະຕິບັດ ມາດຕະການຢ່າງເດັດຂາດ ແລະ ເຂັ້ມງວດ ຕໍ່ທຸກການລະເມີດຕັດໄມ້ທຳລາຍປ່າ ທີ່ບໍ່ໄດ້ຮັບ ອະນຸຍາດ ຈາກລັດຖະບານ.

ມາດຕາ 10: ມອບໃຫ້ກະຊວງອຸດສາຫະກຳ ແລະຫັດຖະກຳ, ກະຊວງການຄ້າ, ຄະນະກຳມະການແຜນການ ແລະ ການລົງທຶນ ແລະກະຊວງອື່ນໆ ທີ່ກ່ຽວຂ້ອງສົມທົບກັນຄົ້ນຄວ້ານະໂຍບາຍ, ກົດໝາຍ, ລະບຽບການຕ່າງໆ ເພື່ອພັດທະນາ ແລະ ຄຸ້ມຄອງເຂດເສດຖະກິດພິເສດ, ເຂດອຸດສາຫະກຳ, ເຂດການຄ້າເສລີ ແລະ ການບໍລິການຜ່ານ ທີ່ລັດຖະບານໄດ້ຕົກລົງແລ້ວນັ້ນ ໃຫ້ສຳເລັດໂດຍໄວ ແນໃສ່ສົ່ງເສີມການຜະລິດ ແລະ ການບໍລິການໃຫ້ເພີ່ມຂື້ນ.

- ເພື່ອປະຕິບັດຍຸດທະສາດ ຫັນເປັນອຸດສາຫະກໍາ ແລະເປັນທັນສະໄໝໃຫ້ເປັນຮູບປະທໍາ ເທື່ອລະກ້າວ, ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າ ສ້າງໂຄງການບູລິມະສິດຜະລິດສິນຄ້າ ຫລື ການບໍລິການທີ່ເປັນປາຍແຫລມ, ໂຄງການປັບປຸງຍົກລະດັບເຕັກນິກ-ເຕັກໂນໂລຊີ ເພື່ອສະເຫນີລັດຖະບານ ພິຈາລະນາ ເອົາເຂົ້າແຜນລົງທຶນໃນປີຕໍ່ໄປ. ຜັນຂະຫຍາຍ ແລະ ການຈັດຕັ້ງປະຕິບັດດໍາລັດ ເລກທີ42/ນຍ ກ່ຽວກັບການຊຸກຍູ້ ແລະ ພັດທະນາວິສາຫະກິດ ຂະໜາດກາງ ແລະ ນ້ອຍ.

- ມອບໃຫ້ ຄະນະກໍາມະການພະລັງງານແຫ່ງຊາດ ຄົ້ນຄວ້າຊອກຫາວິທີທາງ ເພື່ອແກ້ໄຂບັນຫາໂຄງການນໍ້າເທີນ 2 ໃຫ້ສາມາດດໍາເນີນໄປຕາມແຜນ, ສືບຕໍ່ພັດທະນາໂຄງການໄຟຟ້າພະລັງນໍ້າ, ພະລັງງານ ຖ່ານ ຫີນ ແລະພະລັງງານດ້ວຍແສງຕາເວັນດ້ວຍຄະໜາດຕ່າງໆ ແລະພັດທະນາພະລັງງານທີ່ມີແລ້ວ. ພ້ອມດຽວກັນນັ້ນ, ໃຫ້ຄົ້ນຄວ້າ ນະໂຍບາຍນໍາໃຊ້ພະລັງງານ ໃຫ້ມີຄຸນປະໂຫຍດສູງສຸດ ແລະນະໂຍບາຍປະຢັດພະລັງງານ.

- ປະຕິບັດເຄັ່ງຄັດ ລະບຽບການຄຸ້ມຄອງການຂຸດຄົ້ນແຮ່ຄໍາ, ທອງແດງ, ແຮ່ ແກ້ວປະເສີດ ແລະແຮ່ອື່ນໆຕາມກົດໝາຍບໍ່ແຮ່ທີ່ວາງອອກ.

**ມາດຕາ 11:** ມອບໃຫ້ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ສືບຕໍ່ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າໄວ ຮ່າງດໍາລັດ ກ່ຽວກັບກໍານົດໝາຍ, ມາດຖານລາຄາຫົວໜ່ວຍການກໍ່ສ້າງ, ສ້ອມແປງຕ່າງໆນັບທັງກໍານົດລາຄາກາງ ໃນການຄິດໄລ່ການສິ້ນເປືອງ ເພື່ອເປັນພື້ນຖານບັງຄັບໃຊ້ໃນການວາງແຜນ, ຄຸ້ມຄອງ, ກວດກາ ແລະປະເມີນຜົນໂຄງການ ແລະກິດຈະການລົງທຶນຕ່າງໆຢ່າງເປັນລະບົບ. ພ້ອມດຽວກັນນັ້ນ, ກໍ່ສົມທົບກັບກະຊວງ, ຂະແໜງການຕ່າງໆ ອອກລະບຽບການທີ່ໃຫ້ບູລິມະສິດ ແກ່ບໍລິສັດພາຍໃນຂອງລາວ (ທີ່ນໍາໃຊ້ວັດສະດຸກໍ່ສ້າງພາຍ ໃນເປັນຕົ້ນຕໍ ແລະ ນໍາໃຊ້ແຮງງານລາວ) ຮັບເໝົາໂຄງການກໍ່ສ້າງທີ່ໃຊ້ງົບປະມານຂອງລັດ ເພື່ອເສີມຂະຫຍາຍກໍາລັງແຮງ ຂອງເສດຖະກິດພາຍໃນ ແລະ ຮັກສາຄ່າເງິນກີບໃຫ້ມີຄວາມຫມັ້ນຄົງ.

- ເອົາໃຈໃສ່ປົກປັກຮັກສາ ທາງຫລວງແຫ່ງຊາດເພື່ອປະຫຍັດລາຍຈ່າຍ ໃນການສ້ອມແປງ ແລະ ເຮັດໃຫ້ອາຍຸການໃຊ້ງານໄດ້ຍາວນານ ດວ້ຍການເອົາໃຈໃສ່ເຄັ່ງຂັດ ໃນການຊັ່ງນໍ້າໜັກ ລົດບັນທຸກ ແລະ ຫ້າມບໍ່ໃຫ້ລົດບັນທຸກນໍ້າໜັກເກີນມາດຖານທີ່ທາງການໄດ້ກໍານົດ ແລ່ນໃນລະດູຝົນ.

**ມາດຕາ 12:** ມອບໃຫ້ກະຊວງສຶກສາທິການ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະສະຫວັດດີການສັງຄົມ, ກະຊວງຖະແຫລງຂ່າວ ແລະວັດທະນະທໍາ ສົມທົບກັບຄົ້ນຄວ້າ ສ້າງແຜນແມ່ບົດ ແລະໂຄງການພັດທະນາຊັບພະຍາກອນມະນຸດ, ໃຫ້ກະຊວງສຶກສາທິການ ຄົ້ນຄວ້າສ້າງໂຄງການບໍາລຸງຄູ, ຄົ້ນຄວ້ານະໂຍບາຍສົ່ງເສີມ ຊຸກຍູ້ຄູທີ່ສິດສອນໃນເຂດຫ່າງໄກສອກຫຼີກ ແລະ ພູດອຍຊົນເຜົ່າ, ໂຄງການພັດທະນາຫລັກສູດການສຶກສາຂັ້ນພື້ນຖານ ໃຫ້ມີຄຸນນະພາບ ແລະ ໄດ້ມາດຖານ, ໂຄງການຂະຫຍາຍ ແລະ ປັບປຸງຄຸນນະພາບ ວຽກງານອາຊີວະສຶກສາ, ການສຶກສາຊັ້ນສູງ ແລະມະຫາວິທະຍາໄລແຫ່ງຊາດ ໃຫ້ໄດ້ມາດຖານ, ປັບປຸງນະໂຍບາຍການສຶກສາ ພາກເອກກະຊົນ ເພື່ອຂະຫຍາຍໂຮງຮຽນຊັ້ນຕ່າງໆ ໃນແຕ່ລະທ້ອງຖິ່ນ, ເປັນຕົ້ນແມ່ນ ໂຮງຮຽນສາມັນ, ໂຮງຮຽນ ວິຊາຊີບ, ວິທະຍາໄລ ແລະອື່ນໆ. ຮີບຮ້ອນຄົ້ນຄວ້ານະໂຍບາຍ ຍົກເວັ້ນພາສີ, ອາກອນທີ່ເຫມາະສົມໃນຂົງເຂດນີ້ ເພື່ອຕົກລົງ ແລະ ປະກາດໃຊ້ ແນ່ໃສ່ລະດົມກໍາລັງແຮງທົ່ວສັງຄົມ ເຂົ້າໃນການຂະຫຍາຍການສຶກສາ.

ມາດຕາ 13: ມອບໃຫ້ກະຊວງສາທາລະນະສຸກ ຄົ້ນຄວ້າສ້າງເປັນໂຄງການ ແລະ ວາງນະໂຍບາຍ ທີ່ຈຳເປັນຕ່າງໆ ເພື່ອແກ້ໄຂບັນດາພະຍາດ ແລະໂລກລະບາດຕ່າງໆ, ຕ້ອງລະວັງບໍ່ໃຫ້ເກີດ ພະຍາດໄຂ້ຫວັດສັດປີກ ຢູ່ປະເທດເຮົາ, ສືບຕໍ່ຂະຫຍາຍຕາໜ່າງ ການບໍລິການສຸຂະພາບ, ການປິ່ນປົວປະເພດເສັຍຄ່າ ແລະ ບໍ່ເສັຍຄ່າໃຫ້ສອດຄ່ອງກັບສະພາບຕົວຈິງ.

ມາດຕາ 14: ມອບໃຫ້ກະຊວງຖະແຫລງຂ່າວ ແລະວັດທະນະທຳ ຄົ້ນຄວ້າສ້າງໂຄງການ ເພື່ອປັບປຸງລະບົບສື່ມວນຊົນໃຫ້ມີຄຸນນະພາບ, ຊັດເຈນ, ທັນເວລາ, ເປັນສື່ໃນການໃຫ້ຄວາມຮູ້ ຄວາມເຂົ້າໃຈ ທັງມີລັກສະນະສຶກສາອົບຮົມ ໄປຕາມແນວທາງນະໂຍບາຍຂອງພັກ, ໃຫ້ຄວາມຮູ້ດ້ານລະບຽບກົດໝາຍ,ວິທະຍາສາດ ແລະວິຊາການຕ່າງໆ; ເອົາໃຈໃສ່ໂຄສະນາຕົວແບບ, ວຽກດີຄົນເດັ່ນ; ສົ່ງເສີມວັດທະນະທຳທີ່ມີມູນເຊື້ອອັນດີງາມ ໃຫ້ຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ, ຮັບໃຊ້ການທ່ອງທ່ຽວໃຫ້ຫຼາຍຂຶ້ນ, ໃຫ້ຈັດສຳມະນາເຜີຍແຜ່ ຄວາມຮູ້ ທີ່ສົ່ງເສີມມູນເຊື້ອ ແລະ ວັດທະນາທຳຂອງຊາດ. ພ້ອມກັນນັ້ນ ກໍປະກອບສ່ວນເຂົ້າໃນການຕ້ານປະກົດການຫຍໍ້ທໍ້ ແລະ ຕອບຕ້ານກັບຖ້ອຍທຳນອງໂຄສະນາບິດເບືອນຂອງອິດທິກຳລັງປະຕິການ.

ມາດຕາ 15: ມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ຮ່າງກົດໝາຍ ວ່າດ້ວຍ ການປະກັນສັງຄົມທີ່ກວມເອົາທຸກພາກສ່ວນເສດຖະກິດ. ຄົ້ນຄວ້າ ນະໂຍບາຍເງິນເດືອນ ສຳລັບຂົງເຂດວິສາຫະກິດ ນັບທັງວິສາຫະກິດການລົງທຶນຂອງຕ່າງປະເທດ. ຄົ້ນຄວ້າສ້າງແຜນການ ແລະໂຄງການພັດທະນາສີມືແຮງງານ ໃຫ້ມີຄຸນນະພາບ, ຄົ້ນຄວ້າແຜນແກ້ໄຂ ແຮງງານຕ່າງດ້າວທີ່ເຂົ້າມາ ບໍ່ຖືກ ກົດໝາຍ ແລະ ແກ້ໄຂບັນຫາຄົນລາວ ທີ່ອອກໄປເຮັດວຽກຢູ່ຕ່າງປະເທດໃຫ້ຖືກຕ້ອງ. ເອົາໃຈໃສ່ ຄົ້ນຄວ້າປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຜົນງານຕໍ່ການປະຕິວັດ, ຜູ້ອອກກິນເບັ້ຍບຳນານໃຫ້ດີ ແລະ ທົ່ວເຖິງ .

- ປະກາດໃຊ້ຂໍ້ກຳນົດກົດລະບຽບທີ່ຮັດກຸມໃນການຄຸ້ມຄອງແຮງງານຕ່າງດ້າວ ທີ່ເຮັດວຽກໃນ ສປປ ລາວ. ຮັບປະກັນຖັນແຖວພະນັກງານ, ກຳມະກອນເຕັກນິກ ທີ່ພົວພັນກັບການລົງທຶນຕ່າງປະເທດ ໃຫ້ມີພຽງພໍທາງດ້ານຈຳນວນ ແລະ ຄຸນນະພາບ.

ມາດຕາ 16: ໃຫ້ກະຊວງຍຸຕິທຳສົມທົບ ກັບສານປະຊາຊົນ ແລະອົງການໄອຍະການ ເພື່ອກຳນົດມາດຕະການອັນຈຳເປັນຕ່າງໆ ແນໃສ່ຮັບປະກັນຄວາມຍຸຕິທຳໃນສັງຄົມ, ເຂັ້ມງວດຕໍ່ການປະຕິບັດກົດໝາຍ ແລະ ລະບຽບການຕ່າງໆ ເປັນຕົ້ນ ແມ່ນການປະຕິບັດຄຳຕັດສິນຂອງສານ; ຄົ້ນຄວ້າໂຄງການສ້າງນິຕິກຳເພີ່ມເຕີມ ໃຫ້ນັບມື້ນັບເປັນລະບົບຄົບຖ້ວນເທື່ອລະກ້າວ; ພ້ອມທັງຈັດສຳມະນາ ແລະໂຄສະນາເຜີຍແຜ່ຢ່າງກວ້າງຂວາງແນໃສ່ເຮັດໃຫ້ທົ່ວສັງຄົມເຊື່ອມຊຶມ ຢ່າງໜັກແໜ້ນກວ່າເກົ່າ.

ມາດຕາ 17: ຂະແໜງການປ້ອງກັນຊາດ ປ້ອງກັນຄວາມສະຫງົບ ແລະ ອຳນາດການປົກຄອງທຸກຂັ້ນຕ້ອງເອົາໃຈໃສ່ເຮັດໃຫ້ທົ່ວປະເທດ ມີຄວາມສະຫງົບຢ່າງໜັກແໜ້ນ, ໃນສະເພາະໜ້ານີ້ ແມ່ນຮັບປະກັນ ບໍ່ໃຫ້ມີເຫດການຮ້າຍເກີດຂຶ້ນ ເພື່ອເຮັດໃຫ້ກອງປະຊຸມສຸດຍອດອາຊຽນ ດຳເນີນໄປໃນບັນຍາກາດແຫ່ງຄວາມສະຫງົບປອດໄພ ແລະ ຄວາມເຊື່ອໝັ້ນ. ຕັ້ງໜ້າປະກອບສ່ວນໃນການສ້າງສາພັດທະນາປະເທດຊາດ, ຂົນຂວາຍ, ປຸກລະດົມ ແລະ ຈັດຕັ້ງມະຫາຊົນ ເຂົ້າຮ່ວມວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ ຢູ່ຮາກຖານໃຫ້ກວ້າງຂວາງ.

- ມອບໃຫ້ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະກະຊວງການຕ່າງປະເທດ ສົມທົບກັບຄົ້ນຄວ້າລະບຽບການ ແລະມາດຕະການທີ່ເໝາະສົມ ເພື່ອອຳນວຍຄວາມສະດວກ, ຄຸ້ມຄອງ ແລະຮັບປະກັນຄວາມປອດໄພ ໃຫ້ແກ່ການທ່ອງທ່ຽວ, ນັກທຸລະກິດ,ນັກລົງທຶນ,ນັບທັງຜູ້ຊ່ຽວຊານຕ່າງປະເທດ ແນໃສ່ ສ້າງສະພາບແວດລ້ອມທີ່ດີ ໃຫ້ແກ່ການຈັດກອງປະຊຸມລະດັບສາກົນ, ການທ່ອງທ່ຽວ ແລະ ການເຄື່ອນໄຫວດຳເນີນທຸລະກິດ ແລະລົງທຶນຢູ່ ສປປ. ລາວ ຕາມນະໂຍບາຍ ຂອງລັດຖະບານ.

ມາດຕາ 18: ມອບໃຫ້ອົງການກວດກາແຫ່ງລັດ ຮີບຮອັນຄົ້ນຄວ້າກົນໄກ ແລະລະບຽບການ ຕິດຕາມກວດກາການປະຕິບັດ ລາຍຈ່າຍງົບປະມານ ຂອງບັນດາຂະແໜງການສູນກາງ ແລະທ້ອງຖິ່ນ ຢ່າງເຄັ່ງຄັດກວ່າເກົ່າ ເພື່ອຮັບປະກັນໃຫ້ການປະຕິບັດລາຍຈ່າຍ ໄປຕາມແຜນການທີ່ໄດ້ອະນຸມັດ. ພ້ອມກັນນັ້ນ, ຕ້ອງກວດກາຄວາມຖືກຕ້ອງ ແລະໃຫ້ສອດຄ່ອງໃນການຈັດຕັ້ງ ແລະນຳໃຊ້ທຶນ ຂອງບັນດາກອງທຶນຕ່າງໆ ທີ່ຂະແໜງການສູນກາງ ແລະທ້ອງຖິ່ນສ້າງຕັ້ງຂຶ້ນ ເພື່ອເຮັດໃຫ້ລາຍຮັບ-ລາຍຈ່າຍ ລວມສູນ ຜ່ານງົບປະມານແຫ່ງລັດ ຕາມກົດໝາຍກຳນົດໄວ້ ທັງເພື່ອ ເສີມຂະຫຍາຍຄຸນປະໂຫຍດ ຂອງແຫຼ່ງທຶນຕ່າງໆໄດ້ເປັນຢ່າງດີ. ລົງກວດກາຢ່າງໃກ້ຊິດ ໃນການຈັດຕັ້ງປະຕິບັດ ຮ່ວງລາຍຮັບ-ລາຍຈ່າຍຕ່າງໆ ຂອງງົບປະມານແຕ່ຂັ້ນແຂວງ, ແຂວງລົງຫາ ຂັ້ນເມືອງ ແລະ ບ້ານ.

ມາດຕາ 19: ມອບໃຫ້ຄະນະປັບປຸງທຸລະກິດ ສົມທົບກະຊວງການເງິນ ແລະ ທະນາຄານ ສືບຕໍ່ປັບປຸງການບໍລິຫານຄຸ້ມຄອງການແກ້ໄຂໜີ້ສິນ ຂອງລັດວິສາຫະກິດ ໃຫ້ສຳເລັດເປັນກ້າວໆ ເພື່ອໃຫ້ເຂົາເຈົ້າເຄື່ອນໄຫວມີປະສິດທິພາບກວ່າເກົ່າ. ພ້ອມດຽວກັນນັ້ນ, ກໍ່ເອົາໃຈໃສ່ປັບປຸງລະບົບບັນຊີຂອງລັດວິສາຫະກິດ ໃຫ້ເປັນລະບົບ ແລະຮັບປະກັນຄວາມໂປ່ງໃສ. ສືບຕໍ່ປະຕິບັດແຜນປັບປຸງວິສາຫະກິດ ຢ່າງຕັ້ງໜ້າແລະມີຜົນສັກສິດ ໃນການຈັດຕັ້ງ ປະຕິບັດ ແຜນດຳເນີນງານຂອງຕົນ. ເພີ່ມທະວີການປະສານງານລະ ຫວ່າງພາກສ່ວນຕ່າງໆທີ່ກ່ຽວຂ້ອງໃນການຄຸ້ມຄອງງົບປະມານ, ຈັດຕັ້ງການກວດສອບ, ກວດກາບັນດາວິສາຫະກິດ ແລະ ອົງການທີ່ໃຊ້ງົບປະມານ.

ມາດຕາ 20: ມອບໃຫ້ອົງການວິທະຍາສາດ ເຕັກໂນໂລຊີ ແລະສິ່ງແວດລ້ອມ ສ້າງໂຄງການຄົ້ນຄວ້າວິທະຍາສາດການນຳໃຊ້ ສຳລັບຂະແໜງ ທີ່ເຫັນວ່າເໝາະສົມກັບ ສປປ.ລາວ, ໃນນີ້ ນັບທັງໂຄງການຮ່ວມມືຄົ້ນຄວ້າກັບສາກົນ, ໂຄງການກໍ່ສ້າງນັກຄົ້ນຄວ້າ ໃນດ້ານຕ່າງໆ ທັງຢູ່ພາຍໃນ ແລະ ນອກປະເທດ, ສ້າງແຜນລະດົມແຫຼ່ງທຶນ ເຂົ້າໃນການຄົ້ນຄວ້າ ວິທະຍາສາດ-ເຕັກນິກ ຈາກພາຍໃນສົມທົບກັບການຍາດແຍ່ງ ການຊ່ວຍເຫຼືອຈາກຕ່າງປະເທດ, ສ້າງແຜນນຳໃຊ້ຜົນສຳເລັດ ດ້ານວິທະຍາສາດຂອງໂລກ ເຂົ້າໃນການພັດທະນາ; ຄົ້ນຄວ້າ ແລະເກັບກຳພູມປັນຍາ ຂອງປະຊາຊົນໃນການຜະລິດ, ການບໍລິການ ແລະການດຳລົງຊີວິດທີ່ດີ ເພື່ອສົ່ງເສີມ ແລະເຜີຍແຜ່ຈາກທ້ອງຖິ່ນນີ້ ໄປສູ່ທ້ອງຖິ່ນອື່ນໆ.

ມາດຕາ 21: ມອບໃຫ້ອົງການທ່ອງທ່ຽວແຫ່ງຊາດ ສ້າງໂຄງການປັບປຸງການບໍລິການ ການທ່ອງທ່ຽວທຸກປະເພດ ໃຫ້ໄດ້ມາດຕະຖານເພື່ອດຶງດູດ ນັກທ່ອງທ່ຽວເພີ່ມຂຶ້ນ, ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ ແລະ ເຮັດຂາອອກກັບທີ່ ຢູ່ໃນແຕ່ລະທ້ອງຖິ່ນ, ໃຫ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າກະກຽມເງື່ອນໄຂຕ່າງໆ ເປີດ ດ່ານ

ສາກົນທີ່ເໝາະສົມ, ປະຕິບັດການອອກວີຊາກັບດ່ານ ໃຫ້ກວ້າງກວ່າເກົ່າ, ສ້າງແຜນພັດທະນາພື້ນຖານ ຮອງຮັບດ້ານການ ທ່ອງທ່ຽວ.

ມາດຕາ 22: ມອບໃຫ້ກົມການປົກຄອງ ຄົ້ນຄວ້າປັບປຸງນະໂຍບາຍ ແລະມາດຕະການຕ່າງໆ ໃນການຜັນຂະຫຍາຍກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ເພື່ອສະເໜີໃຫ້ຂັ້ນເທິງກຳນົດສິດ, ໜ້າທີ່,ຄວາມຮັບຜິດຊອບຂອງສູນກາງ ແລະທ້ອງຖິ່ນ ໃຫ້ສອດຄ່ອງ, ຈະແຈ້ງ ໃນການຄຸ້ມຄອງເສດຖະກິດ-ສັງຄົມ.

- ສົມທົບກັບກະຊວງການເງິນ ແລະ ຫ້ອງການປັບປຸງທຸລະກິດ ຂອງສຳນັກງານນາຍົກລັດຖະມົນຕີຄົ້ນຄວ້ານະໂຍບາຍເງິນເດືອນພະນັກງານ ແລະກຳມະກອນ ຢູ່ຂົງເຂດລັດວິສາ ຫະກິດ ເພື່ອເຮັດໃຫ້ພະນັກງານ, ກຳມະກອນເຫຼົ່ານັ້ນ ມີລະດັບເງິນເດືອນທີ່ສົມເຫດສົມຜົນ.

ມາດຕາ 23: ໃຫ້ບັນດາກະຊວງ, ແຂວງ ແລະ ເມືອງ ອີງໃສ່ພາລະບົດບາດຂອງຕົນ ແລະ ອີງໃສ່ ນະໂຍບາຍ ແລະ ລະບຽບກົດໝາຍທີ່ມີແລ້ວ ເພື່ອເສີມຂະຫຍາຍ ຄວາມຮັບຜິດຊອບການເມືອງຂອງຕົນໃຫ້ສູງຂຶ້ນ. ຫລີກເວັ້ນ ການເອື່ອຍອີງ ແລະ ຖິ້ມຄວາມຮັບຜິດຊອບໃຫ້ກັນ.

ມາດຕາ 24: ໃຫ້ສະຖາບັນຄົ້ນຄວ້າເສດຖະກິດ, ສະຖາບັນອື່ນໆ ດຳເນີນການຄົ້ນຄວ້າເພື່ອຮັບໃຊ້ໃຫ້ແກ່ການຄຸ້ມຄອງເສດຖະກິດ-ສັງຄົມ ໂດຍມີການຈັດສຳມະນາ, ເຜີຍແຜ່ ແລກປ່ຽນບົດຮຽນລະຫວ່າງວິຊາການຂອງບັນດາຂະແໜງການຕ່າງໆ ເພື່ອໃຫ້ມີຂໍ້ມູນຂ່າວສານຮັບໃຊ້ໃຫ້ແກ່ ການນຳ. ພ້ອມທັງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້ານະໂຍບາຍປຸກລະດົມ ແລະ ນຳໃຊ້ປັນຍາຄວາມຮູ້, ບົດຮຽນທີ່ອຸດົມຮັ່ງມີຂອງຄົນລາວ ຈາກທຸກພາກສ່ວນ (ນັບທັງຢູ່ພາຍໃນ ແລະ ຄົນລາວ ທີ່ ຮັກຊາດ ຢູ່ຕ່າງປະເທດ) ເພື່ອປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຄົ້ນຄວ້າ, ສິດສອນ, ໃຫ້ຄຳປຶກສາ, ຝຶກອົບຮົມ ໃນສະຖາບັນສຶກສາ, ເວທີສຳມະນາ ແລະ ຮູບການອື່ນ ເພື່ອສ້າງກຳລັງແຮງສັງລວມໃນການພັດທະນາປະເທດຊາດ.

ມາດຕາ 25: ຫ້າມເດັດຂາດ ບໍ່ໃຫ້ຂະແໜງການໃດ, ທ້ອງຖິ່ນໃດຫຼຸດຜ່ອນ ຫຼື ຍົກເວັ້ນພາສີ-ອາກອນ ແລະຄ່າທຳນຽມທຸກປະເພດຕາມລຳພັງ. ທຸກການຍົກເວັ້ນ ຫຼື ຫຼຸດຜ່ອນພາສີ-ອາກອນແລະພັນທະອື່ນໆ ຕໍ່ງົບປະມານແຫ່ງລັດ ແມ່ນລັດຖະບານເປັນຜູ້ຕົກລົງ ໂດຍຜ່ານການຄົ້ນຄວ້າ ຂອງກະຊວງການເງິນ. ຖ້າຂະແໜງການໃດ ຫຼືທ້ອງຖິ່ນໃດ ຫາກຝ່າຝືນ ແມ່ນຈະຖືກພິຈາລະນາດ້ານວິໄນຢ່າງເຂັ້ມງວດ. ລາຍຮັບເກີນແຜນທີ່ລັດຖະບານມອບໃຫ້ທີ່ປະຕິບັດຖືກຕ້ອງ ຕາມລະບຽບກົດໝາຍ ແມ່ນຈະອະນຸມັດໃຫ້ ທ້ອງຖິ່ນນຳໃຊ້ 100%, ສ່ວນທ້ອງຖິ່ນ ທີ່ມີລາຍຮັບເກີນດຸນນັ້ນ ຕ້ອງປະຕິບັດພັນທະຕໍ່ສູນກາງ ໃຫ້ຄົບຖ້ວນ ຖືກຕ້ອງຕາມແຜນການ, ລະບຽບກົດໝາຍ ແລະທັນເວລາທີ່ກຳນົດໄວ້. ຫ້າມບໍ່ໃຫ້ບຸກຄົນ ແລະ ການຈັດຕັ້ງ ເກັບຄ່າທຳນຽມ ແລະ ຄ່າບໍລິການ ທີ່ບໍ່ນອນຢູ່ໃນລະບຽບກົດ ໝາຍ.

ມາດຕາ 26: ຫ້າມເດັດຂາດບໍ່ໃຫ້ຂະແໜງການໃດ, ທ້ອງຖິ່ນໃດ ສ້າງໜີ້ສິນເພີ່ມໃຫ້ງົບປະມານແຫ່ງລັດ, ເປັນຕົ້ນ ແມ່ນໃຫ້ຢຸດຕິ ການໃຫ້ຫົວໜ່ວຍທຸລະກິດ ປະຕິບັດໂຄງການກ່ອນ ແລ້ວຈຶ່ງຂຶ້ນແຜນງົບປະມານຊຳລະ

ຕາມພາຍຫລັງ. ທຸກອົງການຈັດຕັ້ງ ທີ່ໄດ້ຮັບການເບີກຈ່າຍ ຈາກງົບປະມານຂອງລັດ ຕ້ອງປະຕິບັດຕາມຮວ່ງລາຍຈ່າຍຂອງແຜນງົບປະມານ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວຢ່າງເຂັ້ມງວດ.

**ມາດຕາ 27:** ມອບໃຫ້ຄະນະກຳມະການແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງຂະແຫນງການອື່ນໆ, ສ້າງບົດແນະນຳ ວິທີຈັດຕັ້ງປະຕິບັດ ແລະ ແຜນດຳເນີນງານລະອຽດດ້ານວິຊາສະເພາະທີ່ກ່ຽວຂ້ອງຂອງຕົນ ເພື່ອຜັນຂະຫຍາຍດຳລັດສະບັບນີ້. ຈັດຕັ້ງເຜີຍແຜ່ ແຜນພັດທະນາ ເສດຖະກິດ-ສັງຄົມ 2004-05 ຢ່າງເລິກເຊິ່ງ ແລະ ເປັນຂະບວນ ແຕ່ສູນກາງລົງຮອດທ້ອງຖິ່ນ ໄປພ້ອມກັບການໂຄສະນາເຜີຍແຜ່ ຜ່ານລະບົບສື່ມວນຊົນຕ່າງໆ.

**ມາດຕາ 28:** ມອບໃຫ້ ນະຄອນຫລວງວຽງຈັນ, ບັນດາແຂວງ ແລະ ເຂດພິເສດໄຊສົມບູນ, ເອົາໃຈໃສ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ, ປະຕິບັດ ໂຄງການລົງທຶນຂອງລັດທີ່ໄດ້ມອບຫມາຍໃຫ້ຕາມແຜນການ ແລະ 8 ແຜນງານບູລິມະສິດ ໂດຍສະເພາະ ແຜນງານລຶບລ້າງຄວາມທຸກຍາກ, ແຜນງານຢຸດຕິການຖາງປ່າເຮັດໄຮ່ ແລະ ລຶບລ້າງການປູກຝິ່ນ ໃຫ້ໄດ້ຮັບຜົນດີ, ພ້ອມທັງລາຍງານຜົນການຈັດຕັ້ງປະຕິບັດ ຂອງຕົນໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຊາບຢ່າງເປັນລະບົບ ແລະ ປົກກະຕິ.

**ມາດຕາ 29:** ມອບໃຫ້ບັນດາທ່ານລັດຖະມົນຕີວ່າການ, ຫົວໜ້າອົງການທຽບເທົ່າ, ເຈົ້າຄອງນະຄອນວຽງຈັນ, ເຈົ້າແຂວງ ແລະ ຫົວໜ້າເຂດພິເສດ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດ ໃຫ້ລັດຖະບານໃນແຕ່ລະໄລຍະ ຢ່າງເປັນປົກກະຕິ.

**ມາດຕາ 30:** ດຳລັດສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ ວັນທີ 01 ຕຸລາ 2004 ເປັນຕົ້ນໄປ.

**ນາຍົກລັດຖະມົນຕີແຫ່ງ ສ ປ ປ ລາວ**

**ບຸນຍັງ ວໍລະຈິດ**